| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດຂຸດຄົ້ນບໍ່ແຮ່ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoEM-MD-6 | 18.10.2017 | ກົມບໍ່ແຮ່ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | B - ອຸດສາຫະກໍາບໍ່ແຮ່ ແລະ ການຂຸດຄົ້ນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ແຮ່ທາດແມ່ນໜຶ່ງໃນຊັບພະຍາກອນທີ່ສໍາຄັນຂອງ ສປປ ລາວ ຈຶ່ງມີຄວາມຈໍາເປັນຢ່າງຍິ່ງທີ່ຈະຕ້ອງຄວບຄຸມການດໍາເນີນກິດຈະການທັງໝົດທີ່ຕິດພັນກັບ ທຸລະກິດແຮ່ທາດດັ່ງກ່າວ ດ້ວຍການກໍານົດໃຫ້ຕ້ອງມີການຂໍໃບອະນຸຍາດກ່ອນເລີ່ມຕົ້ນດໍາເນີນການ ເພື່ອຫລີກລ່ຽງການດໍາເນີນກິດຈະການແຮ່ທາດໂດຍບໍ່ຖືກຕ້ອງຕາມກົດໝາຍ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ການຈັດຕັ້ງທີ່ມີຈຸດປະສົງໃນການຂຸດຄົ້ນແຮ່ທາດ ຄື ການເອົາແຮ່ທາດຕາມໜ້າດິນ ແລະ ຢູ່ພື້ນດິນ ດ້ວຍວິທີການບຸກເບີກ, ຂຸດຄົ້ນ, ຊີ-ເຈາະ, ດູດ, ລະເບີດ, ຄັດຈ້ອນ ຄຸນນະພາບແຮ່ທາດ, ຍົກຍ້າຍ ແລະ ເກັບມ້ຽນແຮ່ທາດ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | ຫລັງຈາກຜູ້ລົງທຶນໄດ້ສໍາເລັດການສໍາຫລວດ ແລະ ສະເໜີບົດລາຍງານ ກ່ຽວກັບ ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກລະອຽດແລ້ວ ກ່ອນຈະເຂົ້າສູ່ການຂຸດຄົ້ນ, ລັດຖະບານ ມີສິດເຂົ້າຖືຮຸ້ນໃນທຸລະກິດ ກ່ຽວກັບ ແຮ່ທາດດັ່ງກ່າວໄດ້ |

| ຄຸນະສົມບັດ ແລະ ເອກະສານປະກອບ |
|---|

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ | 90 | |
| ຄຸນະສົມບັດຂອງຜູ້ຂໍໃບ ອະນຸຍາດ | 1. ຕ້ອງເປັນວິສາຫະກິດ ຫລື ບໍລິສັດ ທີ່ໄດ້ຮັບການສ້າງຕັ້ງ ແລະ ຈົດທະບຽນດໍາເນີນທຸລກິດກ່ຽວກັບແຮ່ທາດ ຢ່າງຖືກຕ້ອງ 2. ມີຖານະທາງດ້ານການເງິນທີ່ໝັ້ນຄົງ, ສາມາດມີແຫລ່ງທຶນພຽງພໍ ແລະ ມີຫລັກຊັບຄໍ້າປະກັນ ຕາມລະບຽບການ 3. ມີປະຫວັດຄວາມເປັນມາ ກ່ຽວກັບ ການດໍາເນີນທຸລະກິດທີ່ດີ ແລະ ໜ້າເຊື່ອຖື 4. ມີວິຊາການທາງດ້ານເຕັກນິກ ແລະ ປະສົບການ ກ່ຽວກັບ ການຂຸດຄົ້ນແຮ່ທາດ 5. ມີແຜນການຂຸດຄົ້ນ, ແຜນການປຸງແຕ່ງ ແລະ ບົດວິພາກເສດຖະກິດ-ເຕັກນິກລະອຽດ ທີ່ມີປະສິດທິຜົນ ໂດຍຖືກຮັບຮອງຈາກ ກະຊວງພະລັງງານ ແລະ ບໍ່ແຮ່ ໂດຍສອດຄ່ອງກັບກົດໝາຍ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍ ໃບອະນຸຍາດ? | ປະຕິເສດໃນກໍລະນີຜູ້ລົງທຶນ ມີຄຸນະສົມບັດບໍ່ຄົບຖ້ວນ, ໂດຍສະເພາະ ແມ່ນເງື່ອນໄຂໃນການຮັບຮອງເອົາ ບົດວິພາກເສດຖະກິດ-ສັງຄົມ ສະບັບລະອຽດ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 240 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບ ອະນຸຍາດ | ກໍານົດເວລາການຂຸດຄົ້ນໃນຂອບເຂດເນື້ອທີ່ທັງໝົດ ຕາມສັນຍາສໍາປະທານ ແມ່ນບໍ່ໃຫ້ເກີນ 20 ປີນັບແຕ່ວັນໄດ້ຮັບອະນຸຍາດຂຸດຄົ້ນເປັນຕົ້ນໄປ ແລະ ສາມາດຕໍ່ໄດ້ ບໍ່ໃຫ້ເກີນ 5 ປີ ຊຶ່ງລັດຖະບານເປັນຜູ້ຕົກລົງຕາມແຕ່ກໍລະນີ ໂດຍອີງຕາມຂະໜາດຂອງບໍ່ແຮ່. |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່? | ຄ່າບໍລິການວິຊາ ການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 300000.00 | 0.00 | 300000.00 |
| ຄໍາເຫັນ | ອີງຕາມ: ລັດຖະດໍາລັດ ເລກທີ 03/ປທ | | | |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທຳນຽມ | ຄ່າ ແບບຟອມ ຄຳຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 300000.00 | 0.00 | 300000.00 |
| ຄຳເຫັນ | ອີງຕາມ: ລັດຖະດຳລັດ ເລກທີ 03/ປທ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄຳເຫັນ |
| ກົດໝາຍວ່າດ້ວຍ ແຮ່ທາດ (ສະບັບປັບປຸງ) | 02/ສພຊ | 26.12.2011 | ມາດຕາ 23 ໝວດທີ 2 ທຸລະກິດກ່ຽວກັບບໍ່ແຮ່ (ມາດຕາ 40, 41 ແລະ ມາດຕາ 44) |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ແຜນການຂຸດຄົ້ນບໍ່ແຮ່ |
| ໃບອະນຸຍາດຊອກຄົ້ນແຮ່ທາດ |
| ໃບອະນຸຍາດສຳຫລວດແຮ່ທາດ |
| ໃບຢັ້ງຢືນຮັບຮອງບົດລາຍງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂັ້ນລະອຽດ ກ່ຽວກັບ ໂຄງການຂຸດຄົ້ນແຮ່ທາດຕ່າງໆ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |